ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------:::::oOo:::::-----------

ສານປະຊາຊົນສູງສຸດ

ເລກທີ 39..../ສປສສ

ນະຄອນຫຼວງວຽງຈັນ, ວັນທີ 5 / 2 /2013

# ຄໍາແນະນໍາ

## ຂອງປະທານສານປະຊາຊົນສູງສຸດ

ເຖິງ: ບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ປະທານສານປະຊາຊົນພາກ, ແຂວງ, ນະຄອນ, ຫົວໜ້າສານທະຫານ ແລະ ປະທານສານປະຊາຊົນເຂດ ໃນທົ່ວປະເທດ

ເລື່ອງ: ການນໍາໃຊ້ຮ່າງເອກະສານ

ອີງຕາມ ມະຕິຕົກລົງ ສະບັບເລກທີ 37/ຄປຈ ລົງວັນທີ 6 ພຶດສະພາ 2011 ຂອງຄະນະປະຈໍາສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສານປະຊາຊົນສູງສຸດ;

ອີງຕາມ ການຕົກລົງ ແລະ ເຫັນດີເປັນເອກະພາບ ຂອງກອງປະຊຸມສະພາຜູ້ພິພາກສາ ດັ່ງວັນທີ 27 ກໍລະກົດ 2012;

ຜ່ານມາສັງເກດເຫັນວ່າ ກ່ຽວກັບການນໍາໃຊ້ຮ່າງຄໍາສັ່ງອາຍັດຊັບ, ຍຶດຊັບ ຂອງສານຂັ້ນຕົ້ນ, ສານຂັ້ນອຸທອນ, ສານຂັ້ນລົບລ້າງ ແລະ ຮ່າງໃບຕິດຕາມການໃຊ້ຈ່າຍເງິນວາງສານ ທີ່ສານປະຊາຊົນສູງສຸດ ໄດ້ຮ່າງ ແລະ ແຈ້ງການໃຫ້ສານປະຊາຊົນທ້ອງຖິ່ນ ໄປນໍາໃຊ້ຕາມແຈ້ງການ ຂອງປະທານສານປະຊາຊົນສູງສຸດ ໃນປີ 2007 ແລະ 2008 ນັ້ນ, ຜ່ານການຈັດຕັ້ງປະຕິບັດຮ່າງເກົ່າ ເຫັນວ່າຍັງບໍ່ທັນສອດຄ່ອງກັບສະພາບຕົວຈິງ ດັ່ງນັ້ນ ຈຶ່ງໄດ້ມີການປັບປຸງ ກ່ຽວກັບຮ່າງເອກະສານເຫຼົ່ານີ້ ເພື່ອໃຫ້ມີຄວາມຖືກຕ້ອງ, ສອດຄ່ອງ ແລະ ເປັນເອກະພາບ ກ່ຽວກັບການນໍາໃຊ້ ຂອງສານປະຊາຊົນ ໃນຂອບເຂດທົ່ວປະເທດ.

ປະທານສານປະຊາຊົນສູງສຸດ ອອກຄໍາແນະນໍາດັ່ງນີ້:

1. ການອອກຄຳສັ່ງອາຍັດຊັບ, ຍຶດຊັບ ຂອງສານຂັ້ນຕົ້ນ, ສານຂັ້ນອຸທອນ ແລະ ສານຂັ້ນລົບລ້າງ ສະບັບໃໝ່ນີ້ ປ່ຽນແທນຮ່າງຄຳສັ່ງອາຍັດຊັບ, ຍຶດຊັບ ສະບັບເກົ່າ ທີ່ສານປະຊາຊົນສູງສຸດ ໄດ້ຮ່າງ ແລະ ສົ່ງໄປໃຫ້ນຳໃຊ້ກ່ອນແລ້ວນັ້ນ ຕາມແຈ້ງການ ຂອງປະທານສານປະຊາຊົນສູງສຸດ ສະບັບເລກທີ 274/ສປສສ ລົງວັນທີ 12 ກໍລະກົດ 2007; (ຮ່າງສະບັບໃໝ່ນີ້ ແມ່ນໄດ້ຕິດຄັດມາພ້ອມ).

2. ຮ່າງໃບຕິດຕາມການໃຊ້ຈ່າຍເງິນວາງສານ ສະບັບໃໝ່ນີ້ ປ່ຽນແທນຮ່າງໃບຕິດຕາມການໃຊ້ຈ່າຍເງິນວາງສານ ສະບັບເກົ່າ ທີ່ສານປະຊາຊົນສູງສຸດ ໄດ້ຮ່າງ ແລະ ສົ່ງໄປໃຫ້ນຳໃຊ້ກ່ອນແລ້ວນັ້ນ ຕາມແຈ້ງການ ຂອງປະທານສານປະຊາຊົນສູງສຸດ ສະບັບເລກທີ 341/ສປສສ ລົງວັນທີ 12 ມິຖຸນາ 2008; (ຮ່າງສະບັບໃໝ່ນີ້ ແມ່ນໄດ້ຕິດຄັດມາພ້ອມ).

3. ເມື່ອບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ບັນດາປະທານສານປະຊາຊົນທ້ອງຖິ່ນ ໄດ້ຮັບຄຳແນະນຳສະບັບນີ້ແລ້ວ ໃຫ້ພວກທ່ານຈົ່ງນຳໄປເຜີຍແຜ່ ໃຫ້ບັນດາຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ວິຊາການ ທີ່ຂຶ້ນກັບສິດອຳນາດຂອງຕົນ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ;

ການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຫາກພົບບັນຫາໃດທີ່ຫຍຸ້ງຍາກ, ກໍໃຫ້ລາຍງານຄືນສານປະຊາຊົນສູງສຸດ ເພື່ອຈະຄົ້ນຄວ້າພິຈາລະນາແກ້ໄຂ.

ປະທານສານປະຊາຊົນສູງສຸດ:

ຄຳພັນ ສິດທິດຳພາ

ບ່ອນສົ່ງ;

- ຄະນະປະຈຳສະພາແຫ່ງຊາດ 1 ສະບັບ (ເພື່ອຊາບ)
- ໄອຍະການປະຊາຊົນສູງສຸດ 1 ສະບັບ (ເພື່ອກວດກາ)
- ກະຊວງຍຸຕິທຳ 1 ສະບັບ (ເພື່ອຊາບ)
- ຄະນະສານ ແລະ ບັນດາກົມຂອງສານປະຊາຊົນສູງສຸດ ບ່ອນລະ 1 ສະບັບ (ເພື່ອປະຕິບັດ)
- ບັນດາປະທານສານປະຊາຊົນທ້ອງຖິ່ນ (ເພື່ອຈັດຕັ້ງປະຕິບັດ)
- ສຳເນົາໄວ້ 2 ສະບັບ.